

ທຸລະກິດກະສິກຳ

ທຶນສົມທົບເພື່ອສົ່ງເສີມທຸລະກິດ

BAF II

Business Assistance Facility

ຂໍ້ມູນທຸລະກິດຕົວແບບ ທີ 10

# ສວນປູກ ແລະ ຂະຫຍາຍພັນເບ້ຍໄມ້

## ການສ້າງຄວາມຫຼາກຫຼາຍ ເພື່ອຄວາມຢືດຢຸ່ນ




WOMAN - LED - BUSINESS

# ສວນປູກ ແລະ ຂະຫຍາຍພັນເບ້ຍໄມ້

+856 20 9104 0988

+856 30 5952 346

**ຈຳນວນທຶນສົມທົບ BAF II ທີ່ໄດ້ຮັບ: 2 ທຶນ**

## ປະເພດກິດຈະກຳ BDS

- ການຝຶກອົບຮົມ: ການຂະຫຍາຍພັນພືດ ແລະ ການຄວບຄຸມສັດຕູພືດ

## ຜູ້ໃຫ້ບໍລິການ BDS

- ທ່ານ ຈັນທີ ດວງສະຫວັນ

## ການຂະຫຍາຍກະສິກຳຢູ່ເຂດຊົນນະບົດຂອງແຂວງຫຼວງພະບາງ

ແຂວງຫຼວງພະບາງເປັນທີ່ຮູ້ຈັກດີທີ່ສຸດໃນຊື່ຂອງເມືອງຫຼວງພະບາງ, ເຊິ່ງໄດ້ຮັບການຮັບຮອງຢ່າງເປັນທາງການເປັນເມືອງມໍລະດົກໂລກພາຍໃຕ້ອົງການ UNESCO ໃນປີ 1995. ຊຶ່ງໃນອະດີດເປັນເມືອງຫຼວງຂອງອານາຈັກລາວ, ມົນສະເໜ່ຂອງຫຼວງພະບາງ ແມ່ນທີ່ຕັ້ງຢູ່ແຄມແມ່ນ້ຳຂອງອັນກວ້າງໃຫຍ່ ຕິດກັບແມ່ນ້ຳຄານ, ໄດ້ກາຍເປັນແຫຼ່ງທ່ອງທ່ຽວອັນດັບໜຶ່ງຂອງລາວ ແລະ ລາຍຮັບຈາກການທ່ອງທ່ຽວ ແລະ ການຮັບຕ້ອນເປັນສ່ວນສຳຄັນຂອງເສດຖະກິດຂອງແຂວງ. ຄາດວ່າການເປີດເສັ້ນທາງລົດໄຟລາວ-ຈີນ ຈະເຮັດໃຫ້ມີນັກທ່ອງທ່ຽວເຂົ້າສູ່ແຂວງຫຼາຍຂຶ້ນ.

ແຕ່ຫ່າງຈາກອະດີດເມືອງຫຼວງຂອງແຂວງຫຼວງພະບາງຍັງເປັນບ່ອນຜະລິດກະສິກຳຫຼາຍຢ່າງ ແລະ ໄດ້ຮັບການສະໜັບສະໜູນຈາກວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ (NAFC). ສະພາບດິນຟ້າອາກາດ ແລະ ລະດັບຄວາມສູງຈາກໜ້ານ້ຳທະເລເປັນສິ່ງທີ່ເອື້ອອຳນວຍໃຫ້ການປູກພືດຊະນິດຕ່າງໆ, ລວມທັງກາເຟ, ຊາ, ສາລີ, ໝາກເດືອຍ, ໝາກໄມ້ທ້ອງຖິ່ນຕ່າງໆ ແລະ ເຂົ້າໜຽວ ຢູ່ທົ່ວທຸກແຫ່ງ. ແຕ່ໃນປະຈຸບັນພວກເຮົາເຫັນວ່າຜູ້ປະກອບການດ້ານກະສິກຳທີ່ມີຫົວຄິດກ້າວໜ້າຂອງແຂວງຈະມີການທົດລອງຫັນໄປປູກພືດທີ່ບໍ່ແມ່ນພືດພື້ນເມືອງ. ບັນດາໂຮງແຮມ ແລະ ຮ້ານອາຫານ ຢູ່ທົ່ວແຂວງຫຼວງພະບາງ ເປັນຕະຫຼາດທີ່ມີຄວາມພ້ອມໃນການຊື້ຜະລິດຕະພັນດັ່ງກ່າວ, ຖ້າຜັກ ແລະ ໝາກໄມ້ ມີປະລິມານ, ຄຸນນະພາບ ແລະ ຕອບສະໜອງໄດ້ຕາມຄວາມຕ້ອງການຂອງພວກເຂົາ.

**ໄດ້ຮັບການສະໜັບສະໜູນຈາກ ວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ (NAFC)**

## ຕົ້ນກຳເນີດຂອງສວນ

ສວນປູກ ແລະ ຂະຫຍາຍພັນເບ້ຍໄມ້ ຕັ້ງຢູ່ເມືອງປາກອູ ຫ່າງຈາກນະຄອນຫຼວງພະບາງໄປທາງທິດເໜືອປະມານ 25 ກິໂລແມັດ, ທີ່ເປັນທີ່ຮູ້ກັນດີກ່ຽວກັບຖ້ຳປາກອູ ເຊິ່ງເປັນຖ້ຳທີ່ມີພະພຸດທະຮູບຫຼໍ່ອົງນ້ອຍຫຼາຍຮ້ອຍອົງ ແລະ ໄດ້ກາຍເປັນສະຖານທີ່ທ່ອງທ່ຽວ.

**ສວນປູກ ແລະ ຂະຫຍາຍພັນເບ້ຍໄມ້ ຕັ້ງຢູ່ເມືອງປາກອູ ຫ່າງຈາກນະຄອນຫຼວງພະບາງໄປທາງທິດເໜືອປະມານ 25 ກິໂລແມັດ**



ສວນປູກ ແລະ ຂະຫຍາຍພັນເບ້ຍໄມ້ ເປັນຟາມປູກພືດສວນຄົວທີ່ ເປັນເຈົ້າຂອງ ແລະ ດຳເນີນທຸລະກິດໂດຍທ່ານ ນາງ ມິມີ່ ພິມມາລີ ແລະ ສາມີ ທ່ານ ພຸດທະສາພອນ ໄຊຍະຈັກ. ນາງ ມິມີ່ ຜູ້ທີ່ເຕີບໃຫຍ່ຂຶ້ນມາກັບຟາມ ມີອາຍຸພຽງແຕ່ 25 ປີ, ທີ່ຫາກໍ່ໄດ້ຮັບການສືບທອດຟາມຈາກພໍ່ແມ່ຂອງລາວ. ຟາມດັ່ງກ່າວມີເນື້ອທີ່ທັງໝົດ 15 ເຮັກຕາ, ບວກກັບອີກ 5 ເຮັກຕາທີ່ຄອບຄົວຫາກໍ່ຊື້ມາ ແລະ ດຳເນີນການປູກຝັງໃນປະຈຸບັນ. ລາວຈ້າງພະນັກງານປະຈຳ 6 ຄົນ ແລະ ຈ້າງພະນັກງານຊົ່ວຄາວອີກຫຼາຍຄົນໃນຊ່ວງລະດູເກັບກ່ຽວທີ່ມີວຽກຫຼາຍ.

ເບື້ອງຕົ້ນ, ພືດຫຼັກຂອງຟາມແມ່ນໝາກກ້ຽງ. ເຖິງຢ່າງໃດກໍ່ຕາມ, ໃນຫລາຍປີມໍ່ໆມານີ້ ຟາມໄດ້ຂະຫຍາຍການຜະລິດໃຫ້ມີຄວາມຫຼາກຫຼາຍຂຶ້ນ ໂດຍເພີ່ມການປູກໝາກໄມ້ອື່ນໆ ເຊັ່ນ: ໝາກຕ້ອງ, ໝາກພຸກ, ໝາກເງາະ ແລະ ໝາກອາໂວກາໂດ. ການເພີ່ມຄວາມຫຼາກຫຼາຍນີ້ ເປົ້າໝາຍແມ່ນ ເພື່ອຂະຫຍາຍທຸລະກິດ ແລະ ເພີ່ມລາຍຮັບໃຫ້ຫຼາຍຂຶ້ນຜ່ານການເພາະປູກ ແລະ ການຂະຫຍາຍພືດທີ່ມີມູນຄ່າສູງກວ່າ.



ຜົນລະປູກກຳລັງຖືກຂົນສົ່ງໄປໃຫ້ແກ່ລູກຄ້າ

ແລະ ໃນຂະນະທີ່ພືດເຊັ່ນໝາກສົມໂອ ເຊິ່ງເປັນໝາກໄມ້ຕະກູນໝາກກ້ຽງ (ໃຫຍ່ທີ່ສຸດ) ທີ່ກ່ຽວຂ້ອງກັບໝາກເກຼບຟຸດ ແລະ ໝາກອາໂວກາໂດ້ (ເຊິ່ງກໍ່ເປັນໝາກໄມ້ເຊັ່ນກັນ) ອາດຈະບໍ່ຄຸ້ນເຄີຍໃນຄຳສັບທີ່ເປັນອາຫານແບບດັ້ງເດີມ ແຕ່ພືດເຫຼົ່ານີ້ເປັນທີ່ຕ້ອງການໃນຮ້ານອາຫານ ແລະ ໂຮງແຮມທີ່ໃຫ້ບໍລິການນັກທ່ອງທ່ຽວຕ່າງຊາດ. ການຂະຫຍາຍພືດເຫຼົ່ານີ້ຍັງຊ່ອຍຫຼຸດຄວາມສ່ຽງບາງຢ່າງທີ່ຕິດພັນກັບການປູກພືດປະເພດດຽວກັນ, ການປູກພືດປະເພດດຽວກັນເຊິ່ງປູກທຸກໆປີກາຍເປັນວິທີການຫຼັກໃນຫຼາຍພື້ນທີ່ປູກຝັ່ງໂດຍສະເພາະໃນການຂົນຂວາຍການຜະລິດທີ່ມີຄວາມຕ້ອງການສູງ, ການເພີ່ມຜົນຜະລິດໃຫ້ໄດ້ຫຼາຍທີ່ສຸດ ແລະ ອຸດສາຫະກຳການປູກຝັ່ງໃນຫຼາຍພາກສ່ວນຂອງໂລກ.

ເຖິງຢ່າງໃດກໍ່ຕາມ, ມັນເປັນທີ່ຮັບຮູ້ຫລາຍຂຶ້ນວ່າ ການປູກພືດປະເພດດຽວໃນພື້ນທີກວ້າງເປັນແນວທາງທີ່ມາພ້ອມກັບຄວາມສ່ຽງຫຼາຍຢ່າງ. ຕົວຢ່າງ ເຊັ່ນ: ການກໍ່ໃຫ້ເກີດໂລກພະຍາດສະເພາະເຈາະຈົງຕໍ່ພືດຊະນິດດຽວທີ່ອາດທຳລາຍຜົນຜະລິດທັງໝົດ. ມັນສາມາດເພີ່ມຄວາມສ່ຽງຈາກສັດຕູພືດຊະນິດອື່ນໆຈຳນວນໜຶ່ງ, ເຊິ່ງສົ່ງຜົນໃຫ້ຕ້ອງໃຊ້ຢາຂ້າແມງໄມ້ ໂດຍສະເພາະຕົ້ນໄມ້ໃຫ້ໝາກທີ່ມີຄວາມສ່ຽງຕໍ່ສະຕູພືດ ແລະ ໂລກພະຍາດດັ່ງກ່າວ. ການປູກພືດປະເພດດຽວຍັງສ້າງຄວາມຄຽດໃຫ້ກັບຄວາມຫຼາກຫຼາຍທາງຊີວະພາບ ເນື່ອງຈາກອານານິຄົມຂອງເຜິ້ງ ແລະ ແມງໄມ້ປະສົມເກສອນອື່ນໆ ຕ້ອງດີ້ນລົນເພື່ອຄວາມຢູ່ລອດ ນອກຈາກນີ້ ການເພາະປູກພືດ ຫຼື ໝາກໄມ້ປະເພດດຽວຢ່າງຕໍ່ເນື່ອງຍັງສາມາດເຮັດໃຫ້ດິນຂາດສານອາຫານບາງຊະນິດ ແລະ ເຮັດໃຫ້ຄຸນນະພາບຂອງດິນເຊື່ອມລົງເມື່ອເວລາຜ່ານໄປ ເຊິ່ງນຳໄປສູ່ການເຊື່ອມສະພາບຂອງດິນ ແລະ ຄວາມຈຳເປັນໃນການໃຊ້ສານອາຫານ ແລະ ປຸ໋ຍສັງເຄາະ, ການປູກພືດປະເພດດຽວຈຶ່ງບໍ່ແມ່ນຕົວເລືອກສຳລັບການປູກຝັ່ງແບບອິນຊີ.

## ການດຳເນີນກິດຈະການ, ການຂາຍ ແລະ ການຈຳໜ່າຍ ໃນປະຈຸບັນ

ນອກຈາກການປູກໝາກໄມ້ຊະນິດຕ່າງໆແລ້ວ, ຟາມດັ່ງກ່າວຍັງໄດ້ສະໜອງເບ້ຍລ້ຽງໃຫ້ຟາມ ແລະ ບຸກຄົນອື່ນ ທີ່ສົນໃຈປູກຕົ້ນໄມ້ກິນໝາກ. ຟາມດັ່ງກ່າວມີຕົ້ນໝາກກ້ຽງ 1,500 ຕົ້ນ ແລະ ຕົ້ນໝາກສົ້ມໂອຈຳນວນໜຶ່ງ, ເຊິ່ງມີອາຍຸປະມານ 20 ປີ. ຄາດວ່າຕົ້ນໝາກສົ້ມໂອເຫຼົ່ານີ້ຈະໃຫ້ຜົນຜະລິດໄດ້ຕໍ່ໄປອີກ 30-40 ປີ ຫາກມີການບົວລະບັດທີ່ເໝາະສົມ. ນາງ ມີມີ່ ຍັງສາມາດເກັບກ່ຽວນ້ຳເຜິ້ງໄດ້ຈາກເຜິ້ງທີ່ອາໄສຢູ່ໃນຕົ້ນໄມ້ໃຫຍ່ໃນຟາມ. ນອກຈາກນ້ຳເຜິ້ງທີ່ເອົາມາຜະລິດແລ້ວ, ເຜິ້ງຍັງເປັນວິທີທີ່ດີ ແລະ ເປັນທຳມະຊາດ ໃນການປະສົມເກສອນພືດທີ່ປູກຢູ່ໃນເຂດໃກ້ຄຽງນຳອີກ.

**ຟາມມີຕົ້ນໝາກກ້ຽງ 1,500 ຕົ້ນ ແລະ ຕົ້ນໝາກສົ້ມໂອ ຈຳນວນໜຶ່ງ**

ໃນເວລາທີ່ທີມງານຂອງໂຄງການ BAF II ໄດ້ໄປຢ້ຽມຢາມຟາມໃນເດືອນພະຈິກ ປີ 2023, ນາງ ມີມີ່ ພວມເກັບໝາກສົ້ມໂອ ປະມານ 1,000 ໜ່ວຍ. ໝາກສົ້ມໂອໜ່ວຍໃຫຍ່ແມ່ນຂາຍໃຫ້ນັກທ່ອງທ່ຽວຢູ່ນ້ຳຕົກຕາດກວາງຊີ ໂດຍກົງ (ໜຶ່ງໃນນ້ຳຕົກຕາດທີ່ມີຊື່ສຽງຂອງປະເທດລາວ ແລະ ເປັນແຫຼ່ງທ່ອງທ່ຽວຍອດນິຍົມຂອງປະເທດລາວ), ສ່ວນໝາກສົ້ມໂອໜ່ວຍນ້ອຍແມ່ນຂາຍຢູ່ໜ້າຟາມໃຫ້ພໍ່ຄ້າ ແລ້ວຈຶ່ງນຳໄປຂາຍຕໍ່ຢູ່ຕະຫຼາດໃກ້ຄຽງ. ເຖິງວ່າການຂາຍໃຫ້ຜູ້ບໍລິໂພກໂດຍກົງຈະໄດ້ລາຄາສູງກວ່າ (20,000 ກີບຕໍ່ກິໂລ ທຽບກັບ 10,000 ກີບຕໍ່ກິໂລ ເມື່ອຂາຍໃຫ້ພໍ່ຄ້າ), ຂະບວນການດັ່ງກ່າວ ແມ່ນໃຊ້ແຮງງານຫຼາຍສົມຄວນ ເນື່ອງຈາກການປອກເປືອກ ແລະ ຫຸ້ມຫໍ່ໝາກສົ້ມໂອ. ເນື່ອງຈາກເວລາທີ່ຈຳກັດ ແລະ ວຽກທີ່ບໍ່ມີວັນສິ້ນສຸດໃນຟາມ, ນາງ ມີມີ່ ມັກຂາຍໃຫ້ແມ່ຄ້າຫຼາຍກວ່າເພາະຈະເຮັດໃຫ້ລາວມີເວລາຫຼາຍຂຶ້ນໃນການເຮັດວຽກອື່ນໆຢູ່ໃນຟາມ.

| ຂາຍໃຫ້ຜູ້ບໍລິໂພກໂດຍກົງ | ຂາຍໃຫ້ພໍ່ຄ້າ |
|---|---|
| 20,000 ກີບ ຕໍ່ກິໂລ | 10,000 ກີບ ຕໍ່ກິໂລ |

## ການພັດທະນາ ແລະ ຂະຫຍາຍທຸລະກິດ

ທຳອິດນາງ ມີມີ່ ຮູ້ຈັກກ່ຽວກັບໂຄງການ BAF II ຍ້ອນໄດ້ເຂົ້າຮ່ວມກິດຈະກຳເຜີຍແຜ່ໂຄງການຂອງທີມງານທີ່ແຂວງຫຼວງພະບາງ, ທີ່ມີຈຸດປະສົງເພື່ອສ້າງຄວາມຮັບຮູ້ ກ່ຽວກັບໂຄງການໃຫ້ທຸລະກິດທ້ອງຖິ່ນ. ຫຼັງຈາກໄດ້ຮັບຄຳປຶກຈາກທີມງານໂຄງການ BAF II, ນາງ ມີມີ່ ໄດ້ຕັດສິນໃຈສະເໜີຂໍທຶນສົມທົບເພື່ອຊ່ວຍໃນການຂະຫຍາຍທຸລະກິດຂອງຂອງລາວ.



ໂຕນີ້ບໍ່ແນ່ໃຈວ່າພາສາອັງກິດວ່າຫຍັງ

ທຶນສົມທົບຈາກໂຄງການ BAF II ຄັ້ງທຳອິດໃນປີ 2022 ເຮັດໃຫ້ ນາງ ມີມີ່ ສາມາດຈ້າງຜູ້ໃຫ້ຊ່ຽວຊານໃຫ້ບໍລິການດ້ານທຸລະກິດ BDS ເພື່ອໃຫ້ການຝຶກ

ອົບຮົມກ່ຽວກັບການຂະຫຍາຍພັນພືດ. ການຊ່ວຍເຫຼືອດ້ານວິຊາການນີ້ ໄດ້ສຸມໃສ່ການບຳລຸງຮັກສາຕົ້ນໄມ້ທີ່ໄດ້ຈາກການຂະຫຍາຍພັນຈາກລຳຕົ້ນ ແລະ ຮາກ, ແລະ ເຕັກນິກໃນການຮັກສາເບ້ຍໄມ້ຈົນສາມາດນຳໄປປູກຕໍ່ໄດ້. ປັດໄຈເຫຼົ່ານີ້ໄດ້ເຮັດໃຫ້ຟາມ ຜະລິດແນວພັນໃໝ່ ແລະ ດີກວ່າເກົ່າ, ຂະຫຍາຍແນວພັນ ແລະ ປັບປຸງຄຸນນະພາບຂອງເບ້ຍໄມ້ຂອງຕົນ, ເຊິ່ງຕໍ່ມາໄດ້ນຳໄປປູກໃນຟາມ, ພ້ອມທັງຈຳໜ່າຍໃຫ້ຊາວກະສິກອນ ແລະ ບຸກຄົນອື່ນໆ.



ຈາກການຂະຫຍາຍຟາມຂອງທ່ານ ນາງ ມີມີ່, ໄດ້ມີການປູ້ຕົ້ນໄມ້ກິນຫມາກເພີ່ມເຕີມອອກໄປອີກ ໃນເນື້ອທີ່ຫ້າເຮັກຕາ. ເພື່ອຮັບປະກັນວ່າຕົ້ນໄມ້ເຫຼົ່ານີ້ຈະເລີນເຕີບໂຕຢ່າງມີສຸຂະພາບດີ ແລະ ຜະລິດໝາກໄມ້ໃຫ້ໄດ້ຕາມຄວາມຕ້ອງການທີ່ສາມາດຂາຍໃນລາຄາທີ່ສູງຂຶ້ນໄດ້, ຈາກທີ່ໄດ້ນຳໃຊ້ທຶນສົມທົບຈາກໂຄງການ BAF II ຄັ້ງທີ 2. ທຶນສົມທົບນີ້ແມ່ນໃຊ້ ເພື່ອຈ້າງຊ່ຽວຊານຜູ້ໃຫ້ບໍລິການດ້ານທຸລະກິດ BDS ຄົນເກົ່າ ໃນການຝຶກອົບຮົມພະນັກງານກ່ຽວກັບເຕັກນິກການຄວບຄຸມສັດຕູພືດຕ່າງໆ ຈາກນັ້ນ ຈຶ່ງສາມາດປົກປ້ອງໝາກໄມ້ຈາກແມງໄມ້ຫຼາຍຊະນິດໄດ້ ເຊັ່ນ: ແມງວັນ ແລະ ໜອນ ໝາກໄມ້ໄດ້. ການຝຶກອົບຮົມຄັ້ງນີ້ປະກອບມີວິທີການກະກຽມສີດຢາໄລ່ສັດຕູພືດປອດສານພິດ, ການແຕ່ງກິ່ງ ແລະ ວິທີການຫົດນ້ຳໃຫ້ຕົ້ນໄມ້ກິນໝາກຊະນິດຕ່າງໆຢ່າງຖືກຕ້ອງ ເພື່ອຫຼຸດຜ່ອນຄວາມເສຍຫາຍຈາກແມງໄມ້.

## ການຊອກຫາຜູ້ຊ່ຽວຊານທີ່ຖືກຕ້ອງ

ໃນນາມອະດີດນັກສຶກສາຂອງ ວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ (NAFC), ນາງ ມີມີ່ ສາມາດນຳໃຊ້ເຄືອຂ່າຍຂອງລາວ ເພື່ອເລືອກເອົາຜູ້ຊ່ຽວຊານທີ່ດີທີ່ສຸດທີ່ຈະໃຫ້ການບໍລິການ BDS ດ້ານວິຊາການທີ່ລາວຕ້ອງການ. ອັນນີ້ເປັນຕົວຢ່າງທີ່ດີໃນການຈ້າງຜູ້ຊ່ຽວຊານດ້ານວິຊາການເອກະລາດໃນກໍລະນີ ຕ້ອງການຊ່ວຍເຫຼືອທີ່ມີຄວາມຊຳນິຊຳນານສະເພາະດ້ານສູງ ແລະ ບໍ່ສາມາດຊອກຫາການບໍລິການຈາກບໍລິສັດທົ່ວໄປໄດ້. ອຸປະສັກແມ່ນການຊອກຫາບຸກຄົນທີ່ມີຄວາມສາມາດສະເພາະດ້ານ ແລະ ຈັດຕັ້ງປະຕິບັດກິດຈະກຳດ້ວຍຄວາມຮັບຜິດຊອບສູງ ເພື່ອຮັບປະກັນໃຫ້ພວກເຂົາປະສົບຜົນສຳເລັດໃນການໃຫ້ບໍລິການຕາມທີ່ໄດ້ຕົກລົງກັນໄວ້ກ່ອນໜ້າ. ແຕ່ກໍລະນີນີ້ສະແດງໃຫ້ເຫັນເຖິງຜົນດີຂອງການມີສ່ວນຮ່ວມຈາກເຄືອຂ່າຍໃນອຸດສາຫະກຳ, ສະມາຄົມທຸລະກິດ ແລະ ສະພາການຄ້າໃນທ້ອງຖິ່ນ, ເຮັດໃຫ້ທຸລະກິດສາມາດ "ເຂົ້າເຖິງ" ຄັງຄວາມຮູ້ຕ່າງໆໄດ້.

ຜູ້ໃຫ້ບໍລິການ BDS ບໍ່ວ່າຈະເປັນບໍລິສັດ ຫຼື ບຸກຄົນ ກໍ່ຕາມ, ສິ່ງສຳຄັນແມ່ນການເຮັດສັນຍາຢ່າງເປັນທາງການທີ່ກຳນົດໜ້າວຽກຢ່າງຊັດເຈນ ແລະ ເງື່ອນໄຂດຳເນີນງານຕ່າງໆ, ລວມທັງອັດຕາຄ່າທຳນຽມ, ລະດັບວິຊາການທີ່ຈຳເປັນ, ໄລຍະເວລາ ແລະ ຄວາມຍາກ-ງ່າຍຂອງໜ້າວຽກງານ, 'ຕົວຊີ້ວັດຕ່າງໆ' ແລະ ຜົນໄດ້ຮັບອື່ນໆ ທີ່ອາດຈະສົ່ງຜົນ ຫຼື ບໍ່ສົ່ງຜົນຕໍ່ການຈ່າຍເງິນ. ການກຳນົດເງື່ອນໄຂຕ່າງໃນການຈ້າງງານທີ່ຊັດເຈນ ແລະ ຖືກຕ້ອງ ເປັນສິ່ງທີ່ດີໃຫ້ແກ່ຜູ້ໃຫ້ບໍລິການ BDS, ແລະ ການໃຊ້ເວລາໃນການສ້າງຄວາມເຂົ້າໃຈທີ່ຕົງກັນລະຫວ່າງຜູ້ໃຫ້ບໍລິການ BDS (ບໍ່ວ່າຈະເປັນບໍລິສັດ ຫຼື ບຸກຄົນ) ກັບ ບໍລິສັດລູກຄ້າເປັນສິ່ງທີ່ສຳຄັນຫຼາຍ. ສິ່ງເຫຼົ່ານີ້ ຈະເປັນການຫຼຸດຜ່ອນຄວາມສ່ຽງຕໍ່ການເກີດຂໍ້ຂັດແຍ້ງຕາມພາຍຫລັງ.



ຜົນລະປູກກຳລັງຖືກຂົນສົ່ງທາງເຮືອໃຫ້ແກ່ລູກຄ້າ

## ສິ່ງທ້າທາຍໃນປະຈຸບັນ ແລະ ແຜນການໃນອະນາຄົດ

ສິ່ງທ້າທາຍທີ່ສຳຄັນໜຶ່ງທີ່ຟາມກຳລັງປະສົບພົບພໍ້ໃນປັດຈຸບັນແມ່ນການປ່ຽນແປງຂອງດິນຟ້າອາກາດໃນປະຈຸບັນ ເຊັ່ນ: ນ້ຳຖ້ວມ ອັນເປັນຜົນມາຈາກສະພາບດິນຟ້າອາກາດທີ່ປ່ຽນແປງຜິດປົກກະຕິ ແລະ ຮ້າຍແຮງກວ່າເກົ່າ. ການປ່ຽນແປງດັ່ງກ່າວ ມີແນວໂນ້ມທີ່ຈະເກີດຂຶ້ນຖີ່ກວ່າເກົ່າ, ມີການປ່ຽນແປງຮູບແບບຂອງລົມມໍລະສຸມ, ລວມທັງລະດູຝົນທີ່ສັ້ນລົງ ແລະ ມີປະລິມານນ້ຳຝົນຫຼາຍກວ່າເກົ່າ.



ຊາວສວນກຳລັງເຮັດວຽກເກັບກ່ຽວ

ໃນເດືອນສິງຫາ ແລະ ກັນຍາ ປີ 2023, ນ້ຳຊອງທີ່ຕິດກັບຟາມໄດ້ຖ້ວມ, ຊຶ່ງໄດ້ສົ່ງຜົນກະທົບທາງລົບຕໍ່ຜົນຜະລິດຂອງໝາກສົ້ມໂອ ແລະ ໝາກກ້ຽງ. ໃນການແກ້ໄຂບັນຫາດັ່ງກ່າວ, ນາງ ມີມີ່ ໄດ້ວາງແຜນທີ່ຈະຍົກລະດັບໜ້າດິນຂຶ້ນໃນ

ບາງບ່ອນ ເພື່ອປ້ອງກັນບໍ່ໃຫ້ນໍ້າໄຫຼລົງ. ສະນັ້ນ, ກໍ່ຕ້ອງໃຊ້ລົດໄຖນາ ເຊິ່ງມີຄ່າຈ້າງ 600,000 ກີບຕໍ່ຊົ່ວໂມງ. ຄໍາແນະນໍາໃນການຍົກລະດັບດ້ານເຕັກນິກເປັນບູລິມະສິດອັນດັບໜຶ່ງຂອງຟາມ, ເພື່ອເຮັດໃຫ້ທຸລະກິດເຕີບໃຫຍ່ຂະຫຍາຍໂຕຂຶ້ນ.

ໃນອະນາຄົດ ອາດຂະຫຍາຍການປູກພືດແບບປະສົມປະສານອີກຕື່ມ (ວິທີເຮັດກະສິກໍາທີ່ມີການເກັບກ່ຽວແບບຕໍ່ເນື່ອງໂດຍມີການປູກພືດສອງຢ່າງ ຫຼື ຫຼາຍກວ່າ ໃນດິນຕອນດຽວກັນ, ບາງຄັ້ງກໍ່ເອີ້ນວ່າ 'ການປູກພືດຫຼາກຫຼາຍ), ໂດຍມີການປູກພືດທີ່ສ້າງລາຍຮັບອື່ນໆຢູ່ກ້ອງຮົ່ມຂອງຕົ້ນໝາກສົ້ມໂອ. ພືດເຫຼົ່ານີ້ອາດລວມມີ ພືດທີ່ນໍາມາເຮັດອາຫານປະເພດຕ່າງໆ, ພືດສະໝຸນໄພ, ຫຼື ອາດຈະເປັນດອກໄມ້ (ອີກເທື່ອໜຶ່ງເພື່ອຂາຍໃຫ້ໂຮງແຮມໃນຫຼວງພະບາງ). ຈາກການເລືອກພືດທີ່ຖືກຕ້ອງ, ການປູກພືດແບບປະສົມປະສານຍັງສາມາດສ້າງຜົນປະໂຫຍດດ້ານສຸຂະພາບໃຫ້ກັບດິນ ແລະ ຜົນລະປູກ ອີກດ້ວຍ. ສາມາດສ້າງຄວາມຫຼາກຫຼາຍຂອງແຫຼ່ງລາຍຮັບໃຫ້ແກ່ຊາວກະສິກອນ, ແລະ ສ້າງລາຍຮັບຫຼາຍກວ່າການເກັບກ່ຽວພືດຊະນິດດຽວ. ການປູກພືດແບບປະສົມປະສານໄດ້ຖືກປະຕິບັດມາກ່ອນໃນຫຼາຍຂົງເຂດ ເຊັ່ນ: ການປູກກາເຟ.


ຜົນລະປູກຂອງສອນ

## ຄໍາແນະນໍາສຸດທ້າຍ

ການປູກ ແລະ ຂະຫຍາຍພັນເບ້ຍໄມ້ຢືນຕົ້ນ ຢູ່ແຂວງຫຼວງພະບາງ ເປັນຫຼັກຖານສະແດງເຖິງຄວາມຢືດຢຸ່ນ ແລະ ຄວາມຕັ້ງໃຈຂອງຜູ້ປະກອບການ, ນາງ ມີມີ ແລະ ຄອບຄົວ. ເຖິງວ່າຈະມີສິ່ງທ້າທາຍຫຼາຍຢ່າງ ເຊັ່ນ: ໄພນໍ້າຖ້ວມ ແລະ ການບໍລິຫານທີ່ຕ້ອງການການເອົາໃຈໃສ່ຕໍ່ແຮງງານທີ່ມີຈໍານວນຫຼາຍ ແລະ ການບໍລິຫານຈັດການຟາມ, ທຸລະກິດຂອງລາວຍັງສືບຕໍ່ເຕີບໃຫຍ່ຂະຫຍາຍຕົວຜ່ານການປູກພືດແບບຫຼາກຫຼາຍ ແລະ ການພັດທະນາທຸລະກິດແບບມີຍຸດທະສາດ. ຍ້ອນການສຸມໃສ່ສືບຕໍ່ປັບປຸງວິທີການເຮັດກະສິກໍາ ແລະ ຂະຫຍາຍພື້ນທີ່ການປູກ, ສິ່ງຜົນໃຫ້ບໍລິສັດມີທ່ານກ້າວໃນການເຕີບໃຫຍ່ຂະຫຍາຍໂຕແບບຍືນຍົງ ແລະ ປະສົບຜົນສໍາເລັດໃນອະນາຄົດ.

## ຫົວຂໍ້ສໍາຄັນ






**ທ່ານ ນິກ ຟຣີແມນ**
ຫົວໜ້າທີມງານ BAF II

"ພວກເຮົາມັກຈະຄິດກ່ຽວກັບຄວາມຢືດຢຸ່ນທາງທຸລະກິດຈະກ່ຽວຂ້ອງກັບເຫດການທີ່ເກີດຂຶ້ນເປັນບາງຄັ້ງຄາວເທົ່ານັ້ນເຊັ່ນ:ການແຜ່ລະບາດຂອງພະຍາດໂຄວິດທີ່ຜ່ານມາ ຫຼື ການແຕກສະຫຼາຍຢ່າງຍິ່ງໃຫຍ່ຂອງຕ່ອງໂສ້ການສະໜອງ"

"ແຕ່ສໍາລັບຊາວກະສິກອນລາວຄື ນາງ ມີມີ່, ບັນຫາຄວາມຢືດຢຸ່ນຍັງກ່ຽວຂ້ອງກັບຜົນກະທົບຢ່າງເປັນປະຈໍາ ແລະ ຮ້າຍແຮງຂຶ້ນ ຈາກການປ່ຽນແປງຂອງດິນຟ້າອາກາດ. ການເຮັດກະສິກໍາເປັນວຽກທີ່ຫນັກຫຼາຍ. ເປັນຄໍາຕອບເວລາທ່ານຖາມຊາວກະສິກອນແຕ່ລະຄົນ. ແຕ່ມັນຈະຍາກຂຶ້ນເລື້ອຍໆ, ຍ້ອນວ່າສະພາບດິນຟ້າອາກາດທີ່ຜິດປົກກະຕິນັບມື້ນັບສ້າງໄພຂົ່ມຂູ່ຕໍ່ຜົນຜະລິດ ແລະ ລາຍຮັບ. ນາງ ມີມີ່ ຮູ້ວ່າການຜະລິດພືດທີ່ມີຄວາມຫຼາກຫຼາຍຈະຊ່ວຍໃຫ້ຫຼຸດຜ່ອນຄວາມສ່ຽງໃນລະດັບໜຶ່ງ. ແລະ ນອກຈາກນັ້ນ, ຈາກການປູກຜະລິດຕະພັນທີ່ນັກທ່ອງທ່ຽວຂາເຂົ້າຕ້ອງການ, ຈະເຮັດໃຫ້ລາວສາມາດເອົາຜະລິດຕະພັນຂອງຕົນເຂົ້າໃນຕ່ອງໂສ້ມູນຄ່າທີ່ສູງຂຶ້ນ ທີ່ສາມາດຕອບສະໜອງຜົນກໍາໄລສູງກ່ວາ. ການເອົາໃຈໃສ່ສ້າງມູນຄ່າ ແລະ ຄຸນນະພາບ, ແລະ ບໍ່ນັ້ນໃສ່ພຽງແຕ່ປະລິມານ, ເປັນສິ່ງທີ່ຄວນຈະເຮັດ. ພວກເຮົາຫວັງວ່າມື້ໜຶ່ງລູກຄ້າໃນທົ່ວປະເທດລາວຈະສາມາດຊື້ໝາກໄມ້ຂອງລາວຢູ່ຮ້ານສັບພະສິນຄ້າໃນທ້ອງຖິ່ນຕ່າງໆ ແລະ ນັກທ່ອງທ່ຽວຂາເຂົ້າກໍ່ຈະໄດ້ຊີມໝາກສົ້ມໂອຂອງລາວ ໃນເວລາທີ່ນັກທ່ອງທ່ຽວກິນເຂົ້າເຊົ້າຢູ່ໃນໂຮງແຮມໃນຫຼວງພະບາງ ແລະ ວຽງຈັນ."

# ຂໍ້ມູນເພີ່ມເຕີມ

https://nafcenglish.wordpress.com

https://eos.com/blog/monoculture-farming

https://eos.com/blog/intercropping

https://www.youtube.com/watch?v=iawPAJdnzeU

https://www.tridge.com/intelligences/pomelo

https://www.tridge.com/intelligences/avocado

https://www.tridge.com/intelligences/rambutan

https://www.tridge.com/intelligences/cotton-fruit

https://fas.usda.gov/data

https://climateknowledgeportal.worldbank.org/sites/default/files/2021-06/15505-Lao%20PDR%20Country%20Profile-WEB.pdf

**Food system profile in Laos**
https://agritrop.cirad.fr/603045/1/Food%20system%20profile%20LAO%20PDR_en.pdf

**Gendered roles in agrarian transition**
https://www.mdpi.com/2071-1050/12/13/5403

**ສະແກນ**

ເພື່ອເຂົ້າເບິ່ງເອກະສານແບບອອນລາຍ ສະບັບພາສາລາວ ຫຼື ພາສາອັງກິດ



ກ່ອນໜ້ານີ້, ການຜະລິດຂອງພວກເຮົາແມ່ນອີງໃສ່ວິທີແບບທຳມະຊາດເປັນຫຼັກ, ເຮັດໃຫ້ປະລິມານຂອງການປູກຕົ້ນໄມ້ມີຈຳນວນຈຳກັດ ແລະ ມີສິ່ງທ້າທາຍຫລາຍຢ່າງ, ໂດຍສະເພາະແມ່ນດ້ານເຕັກນິກການຂະຫຍາຍຊະນິດເບ້ຍໄມ້ໃຫ້ຫຼາກຫຼາຍ ແລະ ການປົກປ້ອງຈາກສັດຕູພືດ. ການສະໜັບສະໜູນຈາກໂຄງການ BAF II ສຳລັບທັງສອງກິດຈະກຳ - ການຂະຫຍາຍຊະນິດໝາກໄມ້ໃຫ້ຫຼາກຫຼາຍ ແລະ ການປ້ອງກັນສັດຕູພືດ - ໄດ້ເຮັດໃຫ້ທຸລະກິດຂອງພວກເຮົາມີການເຕີບໃຫຍ່ຂະຫຍາຍໂຕແບບຍືນຍົງ, ເຮັດໃຫ້ການຜະລິດເພີ່ມຂຶ້ນ ແລະ ຫຼຸດຜ່ອນຄວາມເສຍຫາຍລົງ. ພວກເຮົາຂໍຂອບໃຈນຳໂຄງການ BAF II ທີ່ໄດ້ຊ່ວຍພັດທະນາການປູກໝາກໄມ້ຂອງພວກເຮົາ. "

**ນາງ ມິມີ່ ພິມມາລີ**
ຜູ້ຈັດການຝ່າຍປະຕິບັດງານຈອງຟາມ